ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກກະລາດ ປະຊາທິປະໄຕ ເອກກະພາບ ວັດທະນາຖາວອນ

------===000===------

ກະຊວງ ກະສິກຳ ແລະ ປ່າໄມ້ ເລກທີ່ 0057 /ກປ.2006

ນະຄອນຫລວງວຽງຈັນ, ວັນທີ 23 JAN 2006

# ຄຳສັ່ງ

## ຂອງລັດຖະມົນຕີ ວ່າການກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍມາດຕະການປ້ອງກັນ ແລະ ສະກັດກັ້ນ ພະຍາດໄຂ້ຫວັດສັດປີກຢ່າງເຂັ້ມງວດ

ເຖິງ: ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ແລະ ເຂດພິເສດ.

- ອີງໃສ່ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 85/ນຍ, ລົງວັນທີ 31/05/1 993 ວ່າດ້ວຍການ ຄຸ້ມຄອງສັດລ້ຽງ ໃນ ສປປ ລາວ.
- ອີງໃສ່ ຄຳສັ່ງແນະນຳ ຂອງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 27/1/2004 ກ່ຽວກັບ ການຄວບຄຸມ ພະຍາດໄຂ້ຫວັດສັດປີກ.

ພາຍຫລັງທີ່ພະຍາດໄຂ້ຫວັດສັດປີກໄດ້ສະຫງົບລົງ ນັບແຕ່ ວັນທີ 4 ເດືອນ ມີນາ 2004 ເປັນຕົ້ນມາ ເຖິງປັດຈຸບັນນີ້ ບໍ່ທັນໄດ້ມີປະກົດການ ຂອງພະຍາດດັ່ງກ່າວສະແດງອອກຢູ່ໃນ ສປປ ລາວ, ແຕ່ເຖິງຢ່າງໃດກໍຕາມ, ຍັງມີບາງປະເທດຢູ່ໃນພາກພື້ນ ແລະ ໃນໂລກ ຍັງມີລາຍງານສືບຕໍ່ການລະບາດ ຂອງພະຍາດຢ່າງຕໍ່ເນື່ອງ ບໍ່ສະເພາະແຕ່ແຜ່ລະບາດຈາກສັດຫາສັດເທົ່ານັ້ນ ແຕ່ຍັງແຜ່ລະບາດຈາກສັດຫາຄົນອີກດ້ວຍ. ເພາະສະນັ້ນ, ພວກເຮົາຈຶ່ງມີຄວາມຈຳ ເປັນຕ້ອງມີມາດຕະການປ້ອງກັນ ແລະ ສະກັດກັ້ນ ເພື່ອບໍ່ໃຫ້ພະຍາດດັ່ງກ່າວ ສາມາດເກີດຂຶ້ນໄດ້ ແລະ ແຜ່ລາມໃນ ສປປ ລາວ ອີກຮອບໃໝ່.

ລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງດັ່ງນີ້:

1. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫລວງ ແລະ ເຂດພິເສດ ຊີ້ນຳ ແລະ ມອບໝາຍ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ຮີບຮ້ອນປຸກລະດົມ ຊາວກະສິກອນຜູ້ລ້ຽງສັດປີກ ເຊັ່ນ: ໄກ່, ເປັດ, ນົກກະທາ ແລະ ອື່ນໆ ນັບທັງລ້ຽງແບບຄອບຄົວ, ກຸ່ມ ຫລື

ຟາມ ເອົາໃຈໃສ່ດູແລ ປົກປັກຮັກສາສຸຂະພາບ ແລະ ຄຸ້ມຄອງສັດລ້ຽງຂອງຕົນ, ຕິດຕາມ ເຝົ້າລະວັງ ຢ່າງເຄັ່ງຄັດ ໂດຍສະເພາະຢູ່ບັນດາແຂວງ ທີ່ເຄີຍເກີດພະຍາດດັ່ງກ່າວ ໃນຮອບໜຶ່ງຜ່ານມາແລ້ວ ເຊັ່ນ: ນະຄອນຫລວງວຽງຈັນ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ.

2. ຊຸກຍູ້, ແນະນຳ ຮູບແບບການລ້ຽງສັດປີກໃຫ້ແກ່ຊາວກະສິກອນ, ໂດຍໃຫ້ແຍກລ້ຽງສັດປີກແຕ່ລະປະເພດຕ່າງຫາກ, ບໍ່ໃຫ້ລ້ຽງປະປົນກັນ ເປັນຕົ້ນ: ເປັດ ແມ່ນໃຫ້ລ້ຽງສະເພາະເປັດ, ໄກ່ ກໍໃຫ້ລ້ຽງສະເພາະໄກ່ ເພື່ອປ້ອງກັນການຕິດແປດເຊື້ອພະຍາດ, ສະຖານທີ່ລ້ຽງສັດປີກກໍຕ້ອງໄດ້ກຳນົດຂອບເຂດ ແລະ ຂະໜາດ ຕາມຄວາມເໝາະສົມ ກັບຈຳນວນສັດປີກ ເພື່ອບໍ່ໃຫ້ມີຄວາມແອອັດເກີນໄປ, ມີຄອກ ຫລື ເຮືອນຮັງ ແລະ ມີຮົ້ວອ້ອມຮອບ ໂດຍໃຫ້ນຳໃຊ້ວັດຖຸ ທີ່ຫາໄດ້ງ່າຍ ຕາມເງື່ອນໄຂຂອງແຕ່ລະທ້ອງຖິ່ນ ເຊັ່ນ: ຝາກະແຕະສານດ້ວຍໄມ້ເຮັ້ຽ, ຕາໜ່າງຢາງ, ຕາໜ່າງເຫລັກ ຫລື ອື່ນໆ ເພື່ອປ້ອງກັນບໍ່ໃຫ້ສັດປີກ ອອກຫາກິນຊະຊາຍ ອາດເປັນສາເຫດໃຫ້ຕິດເຊື້ອພະຍາດໄດ້, ພ້ອມດຽວກັນນັ້ນ ກໍຕ້ອງໄດ້ທຳການອະນາໄມ ແລະ ຂ້າເຊື້ອພະຍາດພາຍໃນຄອກ ແລະ ບໍລິເວນອ້ອມຮອບ ຢ່າງໜ້ອຍ 1 ເດືອນຕໍ່ຄັ້ງ.

3. ສຳລັບເປັດພັນໄຂ່ທີ່ລ້ຽງປ່ອຍເຄື່ອນຍ້າຍຕາມທົ່ງ ຕ້ອງໄດ້ເອົາໃຈໃສ່ຕິດຕາມ ເຝົ້າລະວັງ ແລະ ມີການຄຸ້ມຄອງຢ່າງເຂັ້ມງວດ, ໃຫ້ຈັດຕັ້ງວິຊາການລ້ຽງສັດ ແລະ ການປະມົງແຂວງ ສົມທົບກັບເມືອງ ລົງເກັບກຳຂໍ້ມູນລະອຽດ ພ້ອມກັບຈັດຕັ້ງຂຶ້ນທະບຽນຟາມ, ໃຫ້ການແນະນຳ ແລະ ກຳນົດຂອບເຂດລ້ຽງເປັດດັ່ງກ່າວ ໃນຂະໜາດພື້ນທີ່ ທີ່ເໝາະສົມ, ຄອກ ຫລື ສະຖານທີ່ພັກຂັງເປັດຊົ່ວຄາວ (ຄອກໝູນວຽນ) ຕ້ອງໄດ້ທຳການອະນາໄມ ແລະ ຂ້າເຊື້ອພະຍາດທຸກຄັ້ງ ກ່ອນຈະເຄື່ອນຍ້າຍອອກໄປຕັ້ງຄອກໃໝ່. ໃນກໍລະນີ ທີ່ນຳໃຊ້ຄອກ ຫລື ສະຖານທີ່ພັກຂັງເປັດຊົ່ວຄາວນັ້ນເກີນກວ່າ 2 ອາທິດ ຕ້ອງໄດ້ທຳການອະນາໄມ ແລະ ຂ້າເຊື້ອພະຍາດ 1 ເດືອນຕໍ່ຄັ້ງ. ພ້ອມດຽວກັນນັ້ນ ກໍໃຫ້ຈັດຕັ້ງ ລົງເກັບສິ່ງສ່ອນຕົວຢ່າງ ຈາກເປັດພັນໄຂ່ ທີ່ລ້ຽງປ່ອຍ ເຄື່ອນຍ້າຍຕາມທົ່ງ ເພື່ອສົ່ງກວດຫາເຊື້ອພະຍາດ ເປັນປົກກະຕິ ທຸກໆ 45-60 ວັນ, ພ້ອມນັ້ນ ກໍໃຫ້ຕິດຕາມ ບ່ອນຈຳໜ່າຍ ຜະລິດຕະພັນ ທີ່ໄດ້ຮັບຈາກຝູງເປັດເຫລົ່ານັ້ນ ເຊັ່ນ ໄຂ່, ຊີ້ນ ແລະ ອື່ນໆ.

4. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ແລະ ເຂດພິເສດ ສົມທົບກັບພາກສ່ວນກ່ຽວຂ້ອງ ຂັ້ນທ້ອງຖິ່ນ ຈັດຕັ້ງໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ໃຫ້ປະຊາຊົນເຂົ້າໃຈ ແລະ ໃຫ້ຄວາມຮ່ວມມື ຕໍ່ກັບມາດຕະການປ້ອງກັນ ແລະ ສະກັດກັ້ນພະຍາດໄຂ້ຫວັດສັດປີກ ທີ່ທາງການວາງອອກ.

5. ແນະນຳ ໃຫ້ປະຊາຊົນ ບັນດາເຜົ່າ ເອົາໃຈໃສ່ ຕິດຕາມ ສຸກຂະພາບສັດປີກ ຂອງຕົນ ຢ່າງໃກ້ສິດ. ໃນກໍລະນີ ພົບ ເຫັນສັດປີກ ເຈັບ ຫລື ຕາຍ ຢູ່ໃນຄອກ ຫລື ຟາມ ຂອງຕົນ ຫ້າມນຳເອົາສັດປີກ ແລະ ສິ້ນສ່ວນຕ່າງໆ ໄປປຸງ ແຕ່ງ ເປັນອາຫານ ຫລື ຈຳໜ່າຍ ຊື້ຂາຍ ເດັດຂາດ. ໃຫ້ເຈົ້າຂອງສັດ ຮີບ ຮ້ອນລາຍງານ ຕໍ່ສັດຕະວະແພດບ້ານ ຫລື ນາຍບ້ານໂດຍ ດ່ວນ ເພື່ອແຈ້ງໃຫ້ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ ແລະ ແຂວງ ແລ້ວແຈ້ງ ຕໍ່ໄປຍັງກົມລ້ຽງ ສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ ເພື່ອວາງມາດຕະ ການ ຄວບຄຸມ ຢ່າງທັນການ.
6. ໃຫ້ກົມລ້ຽງສັດ ແລະ ການປະມົງ ສົມທົບກັບອຳນາດການປົກຄອງທ້ອງຖິ່ນ ປະກອບອຸບ ປະກອນ ເຊັ່ນ: ຢາຂ້າເຊື້ອ, ອຸບປະກອນໃນການເກັບສິ້ນສ່ວນຕົວຢ່າງ ແລະ ອຸບປະກອນ ອື່ນໆທີ່ຈຳເປັນ.
7. ມອບໃຫ້ ກົມລ້ຽງສັດ ແລະ ການປະມົງ ອອກຄຳແນະນຳ ດ້ານວິຊາການ ແລ້ວລົງສົມທົບ ກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ແລະ ເຂດພິເສດ ຊີ້ນຳຂະແໜງ ສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄຳສັ່ງສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ. ພ້ອມ ດຽວກັນນັ້ນ ໃຫ້ມີການສະຫລຸບລາຍງານ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃຫ້ກະຊວງກະ ສິກຳ ແລະ ປ່າໄມ້ ຮັບຊາບນຳ ເປັນແຕ່ລະໄລຍະ.
8. ເມື່ອໄດ້ຮັບ ຄຳສັ່ງສະບັບນີ້ແລ້ວ ຈົ່ງພ້ອມກັນຄົ້ນຄວ້າ ເຊື່ອມຊຶມ ແລະ ນຳໄປຈັດຕັ້ງ ປະຕິ ບັດ ດ້ວຍຄວາມຮັບຜິດຊອບສູງ.

ພ. ລັດຖະມົນຕີ ວ່າການກະຊວງ ກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ດຣ. ຕີ ພົມມະສັກ

<u>ບ່ອນນຳສົ່ງ:</u>

- ຫ້ອງວ່າການສຳນັກງານນາຍົກ 1 ສະບັບ.
  ( ເພື່ອໃຊ້ຕາງລາຍງານ)
- ກະຊວງການເງິນ, ການຄ້າ, ປ້ອງກັນຄວາມສະຫງົບ , ສາທາລະນະສຸກ ແລະ ກະຊວງຖະແຫລງຂ່າວ 1 ສະບັບ.
  ( ເພື່ອຊາບ ແລະ ອອກຂ່າວ )
- ຫ້ອງວ່າການແຂວງ, ນະຄອນຫລວງ ແລະ ເຂດພິເສດ 1 ສະບັບ.
  ( ເພື່ອຊ່ວຍຊີ້ນຳ )
- ພະແນກກະສິກຳ ແລະ ປ່າໄມ້ແຂວງ 1 ສະບັບ.
  ( ເພື່ອປະຕິບັດ )
- ກົມລ້ຽງສັດ ແລະ ການປະມົງ 1 ສະບັບ.
  ( ເພື່ອປະຕິບັດ )
- ເກັບມ້ຽນ 1 ສະບັບ.